# ວິທີເຮັດມັນດ້າງໝັກເພື່ອເປັນອາຫານໝູ

## ໝັກດ້ວຍໃບ ແລະ ຫົວ



ໃຊ້ເຄື່ອງຊ່ວຍແຮງຊອຍຫົວມັນດ້າງ ໃຫ້ໄດ້ຂະໜາດປະມານ 0.3 ຊມ



ອັດຕາສ່ວນປະສົມ: ຫົວມັນດ້າງສົດທີ່ຊອຍແລ້ວ 55 ກິໂລ + ໃບມັນດ້າງສົດ 45 ກິໂລ + ເກືອ 0.5 ກິໂລ



ຄົນໃຫ້ເຂົ້າກັນລະອຽດ ຫຼັງຈາກນັ້ນຈຶ່ງໃສ່ຖົງ



ໃສ່ຖົງ 2 ຊັ້ນ, ຊັ້ນໃນແມ່ນຖົງຢາງ ແລະ ຊັ້ນນອກແມ່ນຖົງກະສອບ. ໃຊ້ຕີນຢຽບໃຫ້ແໜ້ນ, ບໍ່ຄວນໃສ່ຫຼາຍບາດດຽວ, ໃຫ້ໃສ່ເປັນຊັ້ນໆ



ມັດຖົງຕ້ອງໄລ່ລົມອອກຈາກຖົງໃຫ້ໝົດ ແລ້ວມັດຖົງຢາງຊັ້ນໃນກ່ອນ ຈາກນັ້ນຈຶ່ງມັດຖົງກະສອບຊັ້ນນອກຕາມຫຼັງ

## ໝັກດ້ວຍໃບ



ໃຊ້ເຄື່ອງຊ່ວຍແຮງຊອຍໃບມັນດ້າງ ໃຫ້ໄດ້ຂະໜາດປະມານ 2-3 ຊມ



ຕ້ອງໄດ້ຕາກລົມໃຫ້ນໍ້າທີ່ບັນຈຸຢູ່ໃບລະເຫີຍອອກປະມານ 30-40 % ກ່ອນຈຶ່ງເອົາມາເຮັດ



ອັດຕາສ່ວນປະສົມ: ໃບມັນດ້າງສົດທີ່ຊອຍແລ້ວ 100 ກິໂລ + ຮຳອ່ອນ 10 ກິໂລ + ເກືອ 0.5 ກິໂລ. ປະສົມເຂົ້າກັນ



ຫຼັງຈາກປະສົມແລ້ວ ໃສ່ຖົງ 2 ຊັ້ນ, ຊັ້ນໃນແມ່ນຖົງຢາງ ແລະ ຊັ້ນນອກແມ່ນຖົງກະສອບ. ໃຊ້ຕີນຢຽບໃຫ້ແໜ້ນ, ບໍ່ຄວນໃສ່ຫຼາຍບາດດຽວ, ໃຫ້ໃສ່ເປັນຊັ້ນໆ



ມັດຖົງຕ້ອງໄລ່ລົມອອກຈາກຖົງໃຫ້ໝົດ ແລ້ວມັດຖົງຢາງຊັ້ນໃນກ່ອນ ຈາກນັ້ນຈຶ່ງມັດຖົງກະສອບຊັ້ນນອກຕາມຫຼັງ



ຂຽນວັນທີ່ເດືອນປີ ເພື່ອສະດວກການນຳໃຊ້. ເກັບຮັກສາໄວ້ບ່ອນຮົ່ມ. ໝັກດ້ວຍໃບ 2 ອາທິດນຳໃຊ້ໄດ້. ໝັກດ້ວຍຫົວ 3 ອາທິດຂຶ້ນໄປໃຊ້ໄດ້

**ຂໍ້ລະວັງ:**

ອາຫານໝັກເໝາະສຳລັບເກືອໝູທີ່ມີນໍ້າໜັກ 20 ກິໂລຂຶ້ນໄປ ໝູແມ່ທີ່ຍັງປະມານ 2 ເດືອນຈະເກີດລູກບໍ່ຄວນໃຫ້ກິນ


**ຂໍ້ມູນເພີ້ມ:** ສະຖາບັນ ຄົ້ນຄວ້າ ກະສິກຳ ແລະ ປ່າໄມ້
ສູນຄົ້ນຄວ້າກະສິກຳເຂດຮ້ອນສາກົນ (CIAT)
ຕູ້ ປ.ນ 783, ວຽງຈັນ ໂທ: (+856 21) 770 090
E-mail: CIAT-ASIA@cgiar.org